ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

*****************

ກະຊວງອຸດສາຫະກຳ ແລະ ການຄ້າ                                        ເລກທີ 1836 /ອຄ

ນະຄອນຫລວງວຽງຈັນ, ວັນທີ 4/11/2008

**ເຖິງ** : - ຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດ (ພະແນກອຸດສາຫະກຳ ແລະ ການຄ້າ) ໃນຂອບເຂດທົ່ວປະເທດ.

- ປະຊາຊົນບັນເຜົ່າ.

**ເລື່ອງ : ທຸລະກິດທີ່ບໍ່ຈຳເປັນຕ້ອງແຈ້ງຂື້ນທະບຽນວິສາຫະກິດ ຕາມກົດໝາຍວ່າດ້ວຍວິສາຫະກິດ.**

- ອີງຕາມມາດຕາ 3, ມາດຕາ 5 ແລະ ວັກສອງ ມາດຕາ 8 ຂອງກົດໝາຍວ່າດ້ວຍວິສາຫະກິດ, ສະບັບເລກທີ 11/ສພຊ, ລົງວັນທີ 9 ພະຈິກ 2005.

- ອີງຕາມດຳລັດ, ເລກທີ 188/ນຍ, ລົງວັນທີ 17 ສິງຫາ 2006, ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ.

ເພື່ອປະຕິບັດສິດ ແລະ ພັນທະ ໃນການສ້າງຕັ້ງ ແລະ ເຄື່ອນໄຫວທຸລະກິດ ໃຫ້ຖືກຕ້ອງຕາມທີ່ໄດ້ກຳນົດໄວ້ໃນລະບຽບ ກົດໝາຍຕ່າງໆທີ່ກ່ຽວຂ້ອງ ໂດຍສະເພາະກົດໝາຍວ່າດ້ວຍວິສາຫະກິດ ທັງເພື່ອເປັນການສ້າງເງື່ອນໄຂໃຫ້ປະຊາຊົນບັນດາເຜົ່າ ສາມາດດຳເນີນທຸລະກິດ ຫລື ປະກອບອາຊີບໄດ້ຢ່າງສະດວກສະບາຍ, ສ້າງແນວຄິດຮູ້ຈັກຄ້າ ຮູ້ຈັກຂາຍ ມີລາຍໄດ້ ຫຼຸດຜ່ອນຄວາມທຸກຍາກດ້ວຍຕົນເອງເທື່ອລະກ້າວ, ສະນັ້ນ ກະຊວງອຸດສາຫະກຳ ແລະ ການຄ້າ ຈຶ່ງແຈ້ງມາຍັງຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດ (ພະແນກອຸດສາຫະກຳ ແລະ ການຄ້າ) ໃນຂອບເຂດທົ່ວປະເທດ ລວມທັງປະຊາຊົນບັນດາເຜົ່າ ຊາບ ແລະ ປະຕິບັດດັ່ງນີ້ :

ກ. ທຸລະກິດທີ່ບໍ່ຈຳເປັນຕ້ອງແຈ້ງຂື້ນທະບຽນວິສາຫະກິດ ມີດັ່ງນີ້ :

1. ເສດຖະກິດຄອບຄົວໃນດ້ານການຜະລິດກະສິກຳ ແລະ ຫັດຖະກຳ ທີ່ໃຊ້ແຮງງານ ຂອງສະມາຊິກຄອບຄົວຕົນເອງ ໂດຍບໍ່ຈ້າງແຮງງານບຸກຄົນພາຍນອກ ເວັ້ນເສຍແຕ່ລະບຽບ ກົດໝາຍກຳນົດໄວ້ຢ່າງອື່ນ. ສະມາຊິກຄອບຄົວ ໝາຍເຖິງພໍ່ແມ່, ຜົວ ຫລື ເມຍ, ອ້າຍເອື້ອຍນ້ອງຄີງຂອງຜົວ ຫລື ເມຍ ແລະ ລູກຂອງ

ເຈົ້າຂອງຄອບຄົວ ຫລື ລູກຂອງອ້າຍເອື້ອຍນ້ອງຄີງ ທີ່ມີຊື່ໃນສຳມະໂນຄົວດຽວກັນ ຫລື ທີ່ອາໃສຢູ່ໃນຄອບຄົວດຽວກັນເກີນ ກວ່າ 5 ປີຕິດຕໍ່ກັນ (ໃນກໍລະນີບໍ່ມີປຶ້ມສຳມະໂນຄົວ) ;

2. ຜູ້ຄ້າຂາຍນ້ອຍ. ຜູ້ຄ້າຂາຍນ້ອຍປະກອບດ້ວຍ : ຜູ້ດຳເນີນທຸລະກິດທີ່ມີຮ້ານຄ້າຂະໜາດນ້ອຍ, ຜູ້ຄ້າເລ, ຜູ້ຄ້າແຜງລອຍ ຊຶ່ງມີລາຍຮັບປົກກະຕິຕັ້ງແຕ່ 100.000 ກີບລົງມາຕໍ່ວັນ, ໃນນີ້ :

- ຜູ້ຄ້າເລ ໝາຍເຖິງບຸກຄົນທີ່ນຳເອົາສິນຄ້າໄປເລາະຂາຍ ຕາມບ້ານ, ເຮືອນ ຫລື ຕາມສະຖານທີ່ສາທາລະນະ ທີ່ບໍ່ມີຫຼັກແຫຼ່ງແນ່ນອນ ;
- ຜູ້ຄ້າແຜງລອຍ ໝາຍເຖິງ ບຸກຄົນທີ່ດຳເນີນທຸລະກິດຂາຍສິນຄ້າ ໂດຍມີຮ້ານຂາຍ ຊຶ່ງເອີ້ນວ່າແຜງລອຍ ແລະ ເຄື່ອນຍ້າຍຂາຍ ໃນສະຖານທີ່ໃດໜຶ່ງ.

ສຳລັບບາງປະເພດທຸລະກິດຄ້າຂາຍນ້ອຍ ທີ່ມີລາຍຮັບປົກກະຕິຕັ້ງແຕ່ 100.000 ກີບລົງມາຕໍ່ວັນ ແຕ່ຕ້ອງໄດ້ແຈ້ງຂຶ້ນທະບຽນວິສາຫະກິດ ຖ້າມີບົດບັນຍັດດັ່ງກ່າວ ບົ່ງໄວ້ໃນກົດໝາຍທີ່ກ່ຽວຂ້ອງ ເຊັ່ນ ທຸລະກິດຂາຍຢາ.

3. ຜູ້ດຳເນີນທຸລະກິດບໍລິການຂະໜາດນ້ອຍ. ຜູ້ດຳເນີນທຸລິກິດບໍລິການຂະໜາດນ້ອຍ ແມ່ນບຸກຄົນທີ່ດຳເນີນທຸລະກິດບໍລິການ ທີ່ມີລາຍຮັບປົກກະຕິຕັ້ງແຕ່ 100.000 ກີບລົງມາຕໍ່ວັນ ຫລື ຜູ້ດຳເນີນທຸລະກິດບໍລິການທີ່ໄດ້ຮັບການຍົກເວັ້ນການແຈ້ງຂຶ້ນທະບຽນວິສາຫະກິດ ຕາມບົດບັນຍັດຂອງກົດໝາຍທີ່ກ່ຽວຂ້ອງ (ຖ້າມີ).

ສຳລັບບາງປະເພດທຸລະກິດບໍລິການຂະໜາດນ້ອຍ ທີ່ມີລາຍຮັບປົກກະຕິຕັ້ງແຕ່ 100.000 ກີບລົງມາຕໍ່ວັນແຕ່ຕ້ອງໄດ້ແຈ້ງຂຶ້ນທະບຽນວິສາຫະກິດ ຖ້າມີບົດບັນຍົດດັ່ງກ່າວບົ່ງໄວ້ ໃນກົດໝາຍທີ່ກ່ຽວຂ້ອງ ເຊັ່ນ ທຸລະກິດ ໂຮງຮຽນ ຫລື ທຸລະກິດໃຫ້ບໍລິການຄຳປຶກສາ ດັ່ງນີ້ເປັນຕົ້ນ.

4. ຜູ້ຄ້າຂາຍ ຫລື ຜູ້ດຳເນີນທຸລະກິດບໍລິການຕາມລະດູການ. ຜູ້ຄ້າຂາຍ ຫລື ຜູ້ດຳເນີນທຸລະກິດບໍລິການຕາມລະດູການ ໝາຍເຖິງ ບຸກຄົນທີ່ດຳເນີນທຸລະກິດຄ້າຂາຍຜະລິດຕະພັນສິນຄ້າໃດໜຶ່ງ ຫລື ດຳເນີນທຸລະກິດບໍລິການ ເປັນບາງຄັ້ງຄາວ ໂດຍບໍ່ປົກກະຕິ.

ຜູ້ທີ່ດຳເນີນທຸລະກິດ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 1 ເຖິງ ຂໍ້ 4 (ຂໍ້ ກ) ຂອງແຈ້ງການສະບັບນີ້ ຕ້ອງແມ່ນພົນລະເມືອງລາວເທົ່ານັ້ນ.

ຂ. ທຸກການເຄື່ອນໄຫວດຳເນີນທຸລະກິດຂອງຄົນຕ່າງປະເທດ ຢູ່ ສປປ ລາວ ຕ້ອງປະຕິບັດຕາມກົດໝາຍກ່ຽວກັບການລົງທຶນຂອງຕ່າງປະເທດ ຢ່າງເຂັ້ມງວດ.

ຄ. ຜູ້ດຳເນີນທຸລະກິດ ທີ່ບໍ່ຈຳເປັນຕ້ອງແຈ້ງຂຶ້ນທະບຽນວິສາຫະກິດ ຕາມແຈ້ງການສະບັບນີ້ ຕ້ອງປະຕິບັດຕາມລະບຽບ ກົດໝາຍທີ່ກ່ຽວຂ້ອງ ຂອງບັນດາຂະແໜງການຕ່າງໆ ເຊັ່ນ ການເສຍພັນທະ, ການຂຶ້ນທະບຽນອາການ ຫລື ອອກບັດຕິດຕາມ ດັ່ງນີ້ເປັນຕົ້ນ.

ງ. ບຸກຄົນທີ່ລະເມີດຂໍ້ກຳນົດຕາມທີ່ກ່າວມາໃນຂໍ້ 2 ແລະ 3 ຂອງ ຂໍ້ ກ ແລະ ຂໍ້ ຂ ຂອງແຈ້ງການສະບັບນີ້ຖືວ່າເປັນການດຳເນີນທຸລະກິດ ໂດຍບໍ່ຂຶ້ນທະບຽນວິສາຫະກິດ ແລະ ຈະຖືກປະຕິບັດມາດຕະການຕາມທີ່ໄດ້ກຳນົດໄວ້ໃນມາດຕາ 236 ຂອງກົດໝາຍວ່າດ້ວຍວິສາຫະກິດ.

ຈ. ທຸກປະເພດທຸລະກິດ ນອກຈາກທີ່ໄດ້ກ່າວມາ ໃນແຈ້ງການສະບັບນີ້ແລ້ວ ຕ້ອງແຈ້ງຂຶ້ນທະບຽນວິສາຫະກິດ ຕາມທີ່ໄດ້ກຳນົດໄວ້ໃນລະບຽບ ກົດໝາຍທີ່ກ່ຽວຂ້ອງ.

ສ. ປະເພດຂອງທຸກລະກິດທີ່ບໍ່ຈຳເປັນຕ້ອງແຈ້ງຂຶ້ນທະບຽນວິສາຫະກິດຕາມແຈ້ງການສະບັບນີ້ ອາດຈະມີການປັບປຸງ ປ່ຽນແປງ ຕາມຄວາມເໝາະສົມ ໃນແຕ່ລະໄລຍະ.

ດັ່ງນັ້ນ, ຈິ່ງແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ລັດຖະມົນຕີວ່າການ

ກະຊວງອຸດສາຫະກຳ ແລະ ການຄ້າ

**ດຣ. ນາມ ວິຍະເກດ**

ບ່ອນສົ່ງ :

| | |
|---|---|
| - ຫ້ອງວ່າການສູນກາງພັກ | 01 ສະບັບ |
| - ຄະນະເລຂາທິການລັດຖະບານ | 01 ສະບັບ |
| - ບັນດາກະຊວງ | 01 ສະບັບ |
| - ພະແນກອຸດສາຫະກຳ ແລະ ການຄ້າ | 01 ສະບັບ |